# ຄຳນຳ

ທ່ານຜູ້ອ່ານທີ່ຮັກແພງກ່ອນອື່ນຫມົດຂ້າພະເຈົ້າຂໍຂອບໃຈມາຍັງທ່ານທີ່ໄດ້ເສັຽສະລະເວລາອັນມີຄ່າໃນການອ່ານ, ສຶກສາ, ແລະຄົ້ນຄວ້າຈາກປື້ມເຫລັ້ມນີ້ຫວັງວ່າເວລາທີ່ທ່ານເສັຽໄປຄົງຈະກຸ້ມຄ່າເພາະວ່າທ່ານຈະໄດ້ພົບກັບຄວາມຈິງຊື່ງເປັນຂຸມຊັບອັນຮຸ່ງເຮືອງມະຫາສານທີ່ບໍ່ມີສິ່ງໃດໆໃນໂລກນີ້ຈະມີຄຸນຄ່າປຽບທຽບໄດ້ນັ້ນກໍຄື "ທາງໄປສູ່ຄວາມລອດພົ້ນ" ອັນເປັນທາງທີ່ທ່ານຈະໄດ້ເດີນໄປສູ່ຈຸດຫມາຍປາຍທາງໃນບັ້ນປາຍຂອງຊີວິດທີ່ເອີ້ນວ່າ "ຊີວິດອັນຕລອດໄປເປັນນິດ" ເປັນຊີວິດທີ່ຖາວອນຫລືຊີວິດນິຣັນ,ອັນມະຕະ,ຊື່ງເປັນຢູ່ຕລອດໄປຢ່າງບໍ່ສິ້ນສຸດທີ່ພຣະເຈົ້າຊົງຈັດຕຽມໄວ້ໃຫ້.

ອີກປະການນື່ງທ່ານຈະໄດ້ເຂົ້າໃຈຄວາມເປັນມະນຸດຂອງພວກເຮົາຢ່າງຖືກຕ້ອງວ່າມະນຸດເຮົາມີຕົ້ນຕໍ, ຕົ້ນກຳເນີດ,ມາຢ່າງໃດ,ມາຈາກໃສ. ເພາະວ່າມີຫລາຍຄວາມຄິດ, ມີຫລາຍທິສດີກ່າວວ່າມະນຸດເຮົາໄດ້ວິວັດທະນາການຫລືໄດ້ປ່ຽນແປງມາຈາກສັດເດັຽຣະສານຄືມາຈາກລິງ. ຢ່າງໃດກໍຕາມຖ້າຫາກທ່ານຕື່ນແຕ່ນອນໃນຍາມເຊົ້າມືນຕາເຫັນທັມມະຊາດຫລືສັພສິ່ງໃນໂລກນີ້ແລ້ວສລຸບເອົາວ່າມັນເກີດມາເອງ ທ່ານກໍຈະຍອມຮັບວ່າບັນພະບຸຣຸດຂອງທ່ານມາຈາກລີງ ແຕ່ຖ້າຫາກທ່ານໄດ້ອ່ານແລະຄົ້ນຄວ້າຈາກປື້ມເຫລັ້ມນີ້ແລ້ວທ່ານຕື່ນແຕ່ນອນມືນຕາຂື້ນໃນມື້ໃຫມ່ແລະຍອມຮັບວ່າໂລກແລະຈັກກະວານນີ້ມີຜູ້ສ້າງຂື້ນມາທ່ານກໍຈະບໍ່ຄິດອີກຕໍ່ໄປວ່າມະນຸດເຮົາມາຈາກລີງທ່ານຈະຍອມຮັບວ່າມະນຸດເຮົາມາຈາກອົງພຣະຜູ້ເປັນເຈົ້າ, ແລ້ວທ່ານຈະຮູ້ບຸນຄຸນຂອງພຣະເຈົ້າແລະໂມທະນາຂອບພຣະຄຸນພຣະອົງ.

ດັ່ງນັ້ນຫວັງວ່າປື້ມເຫລັ້ມນີ້ຄົງໃຫ້ຄວາມສວ່າງແກ່ທ່ານເພື່ອທ່ານຈະບໍ່ໄດ້ດຳລົງຊີວິດຢູ່ໃນຄວາມມືດອີກຕໍ່ໄປປື້ມເຫລັ້ມນີ້ໄດ້ນຳເອົາຫລັກຖານແລະຫລັກຄວາມຈິງ5ປະການມາອ້າງອີງຊື່ງໄດ້ແກ່.....

1. ຄວາມຈິງທາງວິທຍາສາດ.
2. ຄວາມຈິງທາງທັມມະຊາດ.
3. ຄວາມຈິງທາງພຣະຄັມພີຂອງພຣະເຈົ້າ.
4. ຄວາມຈິງໃນຊີວິດຂອງມະນຸດ.
5. ຄວາມຈິງດ້ານຈິດວິນຍານຂອງຜູ້ທີ່ເຊື່ອ

ເພື່ອໃຫ້ທ່ານໄດ້ພົບກັບຄວາມຈິງ,ຮູ້ຄວາມຈິງ,ແລະຄວາມຈິງນັ້ນຈະເຮັດໃຫ້ທ່ານມີອິສລະພາບຈາກຄວາມງົມງາຍ,ຄວາມມືດມົນ,ແລະຄວາມສົງສັຍໃນສິ່ງທັງປວງ.

ຂໍພຣະເຈົ້າຊົງປະທານສະຕິປັນຍາໃຫ້ແກ່ທ່ານໃນການອ່ານແລະສຶກສາປື້ມເຫລັ້ມນີ້ດ້ວຍເທີ້ນ

ດ້ວຍຄວາມຮັກແພງ

# ພຣະເຈົ້າມີຈິງຫລື?

## ເຫດໃດມະນຸດຈຶ່ງປະຕິເສດວ່າບໍ່ມີພຣະເຈົ້າ?

ກ່ອນອື່ນຂ້າພະເຈົ້າບອກກ່າວເຖິງຂໍ້ພຣະຄັມພີທີ່ກ່ຽວກັບຄຳຖາມຂໍ້ນີ້ທີ່ປາກົດໃນພຣະທັມເພງສັຣເສີນບົດທີ 14:1 ວ່າ ຄົນໂງ່ຄິດຢູ່ໃນໃຈໂຕເອງວ່າໂລກນີ້ "ບໍ່ມີພຣະເຈົ້າ" ພວກເຂົາຕ່າງກໍເປັນຄົນທຳຕົນໃຫ້ຊົ່ວລົງທັງນັ້ນ. ພວກເຂົາໄດ້ພາກັນເຮັດໃນສິ່ງທີ່ໜ້າຢ້ານກົວຫລາຍບໍ່ມີຜູ້ນຶ່ງຜູ້ໃດຈັກຄົນທີ່ເຮັດສິ່ງທີ່ຖືກຕ້ອງ "ບໍ່ມີຜູ້ນຶ່ງຜູ້ໃດຈັກຄົນທີ່ເຮັດສິ່ງທີ່ຖືກຕ້ອງ "ຂໍ້ນີ້ໝາຍຄວາມວ່າບໍ່ມີຈັກຄົນນຶ່ງທີ່ບໍ່ເປັນຄົນບາບຫລືບໍ່ມີຜູ້ໃດເລີຍທີ່ບໍ່ເຮັດບາບ.

ຕໍ່ໄປນີ້ຂ້າພະເຈົ້າຈະກ່າວເຖິງເບື້ອງຫລັງແຫ່ງມະນຸດຊາດຕັ້ງແຕ່ກຳເນີດເຜົ່າພັນສະພາບດັ້ງເດີມທາງຈິດໃຈແລະການປ່ຽນແປງສູ່ສະພາບອັນໜ້າສຍອງຂວັນວ່າເປັນມາຢ່າງໃດຊຶ່ງສົ່ງຜົນໃຫ້ມະນຸດປະຕິເສດພຣະເຈົ້າຢ່າງສິ້ນເຊີງດັ່ງທີ່ພວກເຮົາໄດ້ເຫັນຢູ່ໃນທຸກວັນນີ້.

ການພະຍາຍາມຟື້ນຟູຄວາມເຂົ້າໃຈຂອງມະນຸດເພື່ອຊ່ອຍໃຫ້ມະນຸດເຂົ້າໃຈຢ່າງຖືກຕ້ອງ ຊ້ຳພັດເຮັດໃຫ້ມະນຸດພາກັນຫລົງຜິດເລິກລົງໄປອີກເຊັ່ນພິທີກັມຕ່າງໆທີ່ມະນຸດພາກັນຄິດຄົ້ນດ້ວຍສມອງຂອງຕົນເອງ. ເມື່ອມະນຸດມີຄວາມເຂົ້າໃຈໃນສິ່ງນຶ່ງສິ່ງໃດແລ້ວແທນທີ່ເຂົາຈະຂອບພຣະຄຸນແລະຖວາຍພຣະກຽດແດ່ພຣະເຈົ້າແຕ່ເຂົາຊ້ຳພັດໃຊ້ຄວາມຮູ້ອັນເລັກໆນ້ອຍໆຂອງຕົນເປັນເຄື່ອງມືປະຕິເສດພຣະເຈົ້າ ຖ້າເຂົາເຊື່ອວ່າມີພຣະເຈົ້າແຕ່ເຂົາບໍ່ຍອມເຊື່ອຟັງພຣະເຈົ້າ ກໍຍັງດີກວ່າປະຕິເສດວ່າບໍ່ມີພຣະເຈົ້າ.

ຕົວຢ່າງນຶ່ງທີ່ເຮັດໃຫ້ມະນຸດເຂົ້າໃຈຜິດເຊັ່ນຊາລສ໌ດາຣ໌ວິນສອນວ່າ ມະນຸດເກີດມາຈາກລີງເຮັດໃຫ້ມະນຸດເຂົ້າໃຈຕົນເອງວ່າເກີດມາຈາກລີງແທ້ໆສິ່ງນີ້ຊີ້ໃຫ້ເຫັນວ່າມະນຸດເຮົາກໍໂງ່ພໍສົມຄວນພວກນັກສາສນາບາງຄົນກໍງົມງາຍໄປກັບເຂົາດ້ວຍ. ຖ້າເປັນດັ່ງນັ້ນນາຮົກ, ສວັນກໍພຽງແຕ່ເປັນສິ່ງທີ່ມະນຸດຄິດຂຶ້ນມາເອງເທົ່ານັ້ນ.ມີຜູ້ໃດແດ່ທີ່ມີຄວາມຮູ້ສຶກພາຍໃນຈິດໃຈຂອງຕົນວ່າຕົນເອງເປັນສັດເດັຽຣະສານຂ້າພະເຈົ້າຄິດວ່າບໍ່ມີຜູ້ໃດດອກທີ່ຈະຍອມຮັບໃນໃຈແມ່ນແຕ່ຄົນດຽວ.ແຕ່ທີ່ໄດ້ເວົ້າອອກໄປຢ່າງນັ້ນກໍພຽງແຕ່ຢາກອວດອ້າງຄວາມຮູ້ອັນແປກໆໃໝ່ໆຂອງຕົນເທົ່ານັ້ນ.

ດັ່ງນັ້ນ ຂ້າພະເຈົ້າຜູ້ຂຽນຈຶ່ງມີຄວາມຮ້ອນໃຈໃນການທີ່ຈະແກ້ໄຂຄວາມຄິດຂອງເພື່ອນມະນຸດໃຫ້ຖືກຕ້ອງທັງໃນທາງທັສນະຄະຕິແລະຄວາມຈິງຂອງຊີວິດເພື່ອໃຫ້ສຳເຣັດຕາມເປົ້າໝາຍໃນການເປັນມະນຸດອັນມີຄວາມຈິງອັນສົມບູນແບບໃນທຸກສະພາບການ.

ຄວາມຈິງແລ້ວຊາລສ໌ດາຣ໌ວິນພຽງແຕ່ສເນີຄວາມຮູ້ໃໝ່ໆອັນແປກໆຂອງລາວກັບມະນຸດເທົ່ານັ້ນແຕ່ບັນດາມະນຸດຜູ້ທີ່ເຊື່ອຕາມຊາລສ໌ດາຣ໌ວິນບໍ່ໄດ້ອວດອ້າງຄວາມສລາດຂອງຕົນເລີຍແຕ່ກາຍເປັນການອວດອ້າງຄວາມໂງ່ຂອງຕົນເພາະຄິດວ່າຕົນເອງເປັນລີງຢ່າງແທ້ຈິງຈົນວ່ານາຮົກແລະສວັນໄດ້ຈືດຈາງຫ່າງຫາຍໄປຈາກຄວາມຈິງຍ້ອນວ່າລີງເປັນຕົ້ນເຫດແທ້ໆ.

ຄັ້ງນຶ່ງໃນຣະຫວ່າງຄສ.1955(ພ.ສ.2498)ຂ້າພະເຈົ້າໄດ້ຂຽນຂໍ້ສົງສັຍກ່ຽວກັບເຣື່ອງນີ້ແລະສົ່ງໄປຍັງໂຄງການເຜີຍແຜ່ການສຶກສາກະຊວງສຶກສາທິການແລ້ວໄດ້ຮັບຄຳຕອບຈາກໂຄງການເຜີຍແຜ່ການສຶກສາກະຊວງສຶກສາປະມານເດືອນພຶສຈິກາລາຍລະອຽດຂອງຄຳຖາມແລະຄຳຕອບມີດັ່ງນີ້.

ຂ້າພະເຈົ້າຂໍຮຽນຖາມວ່າທີ່ຊາລສ໌ດາຣ໌ວິນກ່າວວ່າມະນຸດເຮົາວິວັດທະນາການມາຈາກລີງຕາມຄວາມເຂົ້າໃຈຂອງຂ້າພະເຈົ້າຄິດວ່າຊາລສ໌ດາຣ໌ວິນຄົງກັບຊາດຈາກລີງມາເກີດເປັນຄົນອີງຕາມຫລັກຄຳສອນຂອງສາສນາທີ່ເຊື່ອໃນການວຽນຕາຍວຽນເກີດຈິດໃຈຂອງຊາລສ໌ດາຣ໌ວິນຈຶ່ງລະນຶກເຖິງຊາດກຳເນີດດັ້ງເດີມຂອງຕົນໄດ້ແລະໄດ້ຊັກຊວນໃຫ້ຄົນອື່ນຄິດວ່າຕົນເອງມາຈາກລີງເຊັ່ນດຽວກັນ.

ແຕ່ຂ້າພະເຈົ້າບໍ່ເຊື່ອວ່າມະນຸດວິວັດທະນາການມາຈາກລີງເພາະສິ່ງທີ່ມີຊີວິດທຸກຊະນິດກໍມີເຜົ່າພັນຂອງໃຜ

ມັນແລະພືດກໍມີເຜົ່າພັນຂອງມັນມະນຸດກໍເປັນເຜົ່າພັນພິເສດຊຶ່ງຈະເອີ້ນວ່າສັດເດັຽຣະສານບໍ່ໄດ້ຄໍາວ່າເດັຽຣະສານນັ້ນແປວ່າ ໄປທາງຂວາງ ຄືຂນານໄປກັບພື້ນດິນ ແຕ່ມະນຸດຢືນຕົວກົງເຖິງຈະມີຂາດຽວກໍຍັງຢືນຕົວກົງໄດ້ບໍ່ເລືອຄານຂນານໄປກັບພື້ນດິນ. ແລະມະນຸດມາຈາກຄໍາວ່າມະນະຊຶ່ງແປວ່າໃຈແລະຄໍາວ່າອຸລຈ ຫລືອຸສສ ຊຶ່ງແປວ່າສູງດັ່ງນັ້ນມະນຸດຈຶ່ງແປວ່າຜູ້ມີໃຈສູງສ່ວນສັດນັ້ນມາຈາກຄໍາວ່າ ຕຣີ ຊຶ່ງຫມາຍເຖິງໄປດັ່ງນັ້ນ ຈຶ່ງແປວ່າຜູ້ໄປທາງຂວາງສັດບໍ່ມີນາຮົກ,ສວັນ,ແລະນິພານບໍ່ມີຄໍາສອນໃດໆໃນໂລກທີ່ສອນວ່າສັດຕົກນາຮົກແລະຂຶ້ນສວັນເມື່ອຕາຍໄປແລ້ວເຖິງແມ່ນສັດຈະກັດມະນຸດຜູ້ທີ່ຈະໄປນາຮົກຫລືສວັນຕາຍກໍຕາມ ແຕ່ບໍ່ມີຄໍາສອນໃດສອນວ່າສັດຕ້ອງຕົກນາຮົກ.

ກົດຫມາຍສາກົນຮັບຮອງທິສດີຂອງຊາລສ໌ດາຣ໌ວິນຫລືບໍ່? ຖ້າຂ້າພະເຈົ້າຈະກ່າວກັບມະນຸດທີ່ເຊື່ອຕາມຊາລສ໌ດາຣ໌ວິນ ວ່າເຂົາເຈົ້າແມ່ນພວກສັດຍົກເວັ້ນແຕ່ຂ້າພະເຈົ້າ ຈະເປັນການດູຫມິ່ນມະນຸດຫລືບໍ່?

ກົມການກະສິກັມເຄມີກະຊວງກະເສດ "ເປັນຜູ້ຕອບຄໍາຖາມຂອງຂ້າພະເຈົ້າຄໍາຕອບນັ້ນມີດັ່ງຕໍ່ໄປນີ້. ເຣື່ອງຄົນເກີດມາຈາກລີງແລະວິວັດທະນາການມາຈາກລີງ ເປັນເຣື່ອງທີ່ທາງວິທຍາສາດໄດ້ຄົ້ນຄວ້າແລະພິສູດຢືນຢັນມາເປັນເວລາດົນນານແລ້ວ.

ມີຜູ້ສລູບຄວາມເຫັນວ່າແທ້ຈິງແລ້ວຄົນເຮົາບໍ່ໄດ້ມາຈາກລີງແຕ່ວ່າຖ້າສັງເກດໃຫ້ດີເຂົາໃຊ້ຄໍາວ່າອາດຈະມີບັນພະບຸຣຸດຮ່ວມກັນມາບັນພະບຸຣຸດນັ້ນຈະເປັນອັນໃດກໍຕາມແຕ່ກໍມີວິວັດທະນາການປ່ຽນແປງໄປເລື້ອຍໆຕາມຫລັກຂອງການວິວັດທະນາການນັ້ນມະນຸດຄົນແຣກຄົງຈະເກີດຂຶ້ນໂດຍການແຕກຈາກເຫລົ່າກໍ(Multation)ທີ່ມາຈາກບັນພະບຸຣຸດນັ້ນໆແລ້ວຄ່ອຍໆປ່ຽນມາຈົນເທົ່າທຸກວັນນີ້ການທີ່ຢືນຢັນໄດ້ເຊັ່ນນັ້ນກໍເພາະອາສັຍຫລັກການສໍາຣວດຈາກຊາກດຶກດໍາບັນ(Fossils)ຄືຊາກໂຄງກະດູກຂອງສັດແລະພືດທີ່ມີຢູ່ໃນຊັ້ນຂອງດິນໃນພື້ນດິນທີ່ຂຸດຂຶ້ນມາຈຶ່ງຮູ້ຈັກອາຍຸຂອງຊາກດຶກດໍາບັນເຫລົ່ານັ້ນ. ນັກວິທຍາສາດໄດ້ຂຸດຊາກເຫລົ່ານັ້ນຂຶ້ນມາ ແລະໄດ້ພິຈາຣະນາວິນິສັຍໂຄງກະດູກຂອງມະນຸດສມັຍແຣກເທົ່າທີ່ໄດ້ພົບແລະວິນິສັຍກັນວ່າມີອາຍຸປະມານ7ລ້ານ5ແສນກວ່າປີມາແລ້ວ.ໂຄງກະດູກເຫລົ່ານັ້ນເມື່ອພິຈາຣະນາເບິ່ງແລ້ວມີລັກສະນະທີ່ໃຫຍ່ແຂງແຮງໃບຫນ້າກວ້າງຫນ້າຜາກຮາບຕໍ່າມີຂອບເທິງຄິ້ວເປັນໂນນສູງມະນຸດດັ່ງກ່າວນີ້ມີຊື່ວ່າອີແອນໂທຣພັສ()ຫມາຍຄວາມວ່າມະນຸດສມັຍແຣກ.

ສ່ວນລີງຈໍາພວກກໍລິລາທີ່ຈັດວ່າມີລັກສະນະຄ້າຍຄືຄົນຫລາຍທີ່ສຸດນັ້ນເປັນການວິວັດທະນາການມາຈາກບັນພະບຸຣຸດເໝືອນກັນກັບຄົນໂດຍວິທີແຕກເຫລົ່າກໍນີ້ແມ່ນຄໍາຕອບຕາມຫລັກການດ້ານວິທະຍາສາດຊຶ່ງບໍ່ແມ່ນຄົນສືບເຊື້ອສາຍມາຈາກລີງເໝືອນກັບຄໍາສອນຂອງດາຣ໌ວິນ.ທາງວິທຍາສາດໄດ້ໃຊ້ຄໍາວ່າ "ວິນິສັຍວ່າ "ຊຶ່ງເປັນຄໍາທີ່ໃຊ້ໃນທຸກຂະບວນການວິທຍາສາດທີ່ຍັງແກ້ບັນຫາບໍ່ຕົກ.ສາຍເຫດທີ່ຂ້າພະເຈົ້າໄດ້ຍົກເອົາຄໍາຖາມຂອງຂ້າພະເຈົ້າແລະຄໍາຕອບຂອງທາງວິທຍາສາດມາເລົ່າສູ່ຟັງນັ້ນ ກໍເພື່ອໃຫ້ທ່ານຜູ້ອ່ານພົ້ນຈາກການເປັນທາດແຫ່ງຄວາມເຊື່ອໃນທິສດີຂອງຊານສ໌ດາຣ໌ວິນຊຶ່ງຈະເຮັດໃຫ້ມະນຸດສູນເສັຽສະພາບຄວາມຈິງຂອງມະນຸດໄປ.ມະນຸດຈະຕ້ອງໄປຕົກນາຮົກຫລືຂຶ້ນສວັນເພາະວ່າມະນຸດມີວິນຍານ.ຄວາມຈິງຂອງດາຣ໌ວິນເປັນສັນຊາດສະຍານຂອງມະນຸດຫລັງຈາກທີ່ລາວໄດ້ປະກາດລັດທິຂອງລາວອອກມາລາວໄດ້ມີຫລາຍຄວາມຄິດທີ່ຕໍ່ສູ້ກັນຢູ່ໃນພາຍໃນຈິດໃຈຂອງລາວເມື່ອດາຣ໌ວິນລົ້ມປ່ວຍລົງດາຣ໌ວິນບໍ່ມີຄວາມສງົບສຸກໃນໃຈເລີຍບໍ່ຮູ້ວ່າຕົນເອງເປັນຫຍັງລາວໄດ້ຖືກລົງໂທດຢ່າງສາຫັດຢູ່ພາຍໃນຈິດໃຈດາຣ໌ວິນໄດ້ຮ້ອງຫາພຣະເຈົ້າແລະຮ້ອງຫາພຣະຄັມພີເມື່ອລາວໃກ້ຈະຕາຍເພື່ອສາຣະພາບຜິດຕໍ່ພຣະເຈົ້າ.ໃນເມື່ອດາຣ໌ວິນກໍຍັງເປັນຢ່າງນັ້ນແລ້ວຜູ້ທີ່ເຊື່ອໃນຄໍາສອນຂອງລາວຈະເປັນຢ່າງໃດ.ດ້ວຍສາຍເຫດດັ່ງກ່າວນີ້ໂລກເຮົາຈຶ່ງສັບສົນດ້ວຍຄວາມຄິດຂອງມະນຸດເອງເຮັດໃຫ້ຄວາມຈິງຂອງຊີວິດເສື່ອມສລາຍໄປມີບັນຫາໃໝ່ໆເກີດຂຶ້ນມາເລື້ອຍໆຈຶ່ງເຮັດໃຫ້ມະນຸດວົງວອຍຢູ່ສເມີທັ້ງນີ້ກໍຍ້ອນວ່າມະນຸດໄດ້ອວ່າຍຫລັງໃສ່ຄວາມຈິງ,ອວ່າຍຫນ້າໄປສູ່ຄວາມບໍ່ແນ່ນອນຄວາມບໍ່ແນ່ນອນທີ່ຢູ່ໃນໂລກນີ້ມີຫລາຍແຕ່ຄວາມຈິງນັ້ນມີສິ່ງດຽວຄືຄວາມຈິງ(ເຣື່ອງພຣະເຈົ້າ)ທີ່ໂລກກຽດຊັງ. ຕໍ່ໄປນີ້ຂ້າພະເຈົ້າຂໍນໍາທ່ານໄປສູ່ຄວາມຈິງອັນເປັນຕົ້ນເຫດຂອງມະນຸດຊາດວ່າເປັນມາຢ່າງໃດ?

ມະນຸດມາຈາກພຣະເຈົ້າຫລື?ຫລືວ່າເປັນແຕ່ພຽງນິຍາຍ?ຫລືພຽງແຕ່ເປັນເຣື່ອງທີ່ແຕ່ງຂຶ້ນມາເພື່ອຊວນເຊື່ອ?ຖ້າເຮົາຈະພິສູດຕາມຖ້ອຍຄໍາຕໍ່ໄປນີ້ເຮົາກໍຈະສາມາດຮູ້ໄດ້ວ່າເປັນພຽງນິຍາຍທີ່ມະນຸດຄິດຂຶ້ນມາຫລືວ່າເປັນການຊົງ

ບັນດົນຂອງພຣະເຈົ້າທີ່ແຈ້ງໃຫ້ມະນຸດຜູ້ນຶ່ງໄດ້ຈົດບັນທຶກໄວ້ເພື່ອໃຫ້ບັນດາມະນຸດໄດ້ຮູ້,ໄດ້ເຂົ້າໃຈເຖິງຄວາມຈິງຂອງມະນຸດເອງແລະຄວາມຈິງເຣື່ອງພຣະເຈົ້າ.

ພຣະຄັມພີເປັນພຣະຄຳຂອງພຣະເຈົ້າທີ່ຊົງບັນດົນໃຫ້ໂມເຊເປັນຜູ້ຈົດບັນທຶກເພື່ອໃຫ້ມະນຸດທົ່ວໂລກໄດ້ຮູ້ແລະເຂົ້າໃຈເຣື່ອງຂອງຕົນເອງແລະເຣື່ອງພຣະເຈົ້າ.ຫລັງຈາກພຣະເຈົ້າຊົງໄດ້ສ້າງຈັກກະວານແລ້ວຕາມທີ່ປາກົດໃນພຣະທັມປະຖົມມະການໃນບົດທີ 1 ຂໍ້ 26 ກ່າວວ່າ ພຣະເຈົ້າໄດ້ຊົງສ້າງສັດທັງຫຼາຍຕາມຊະນິດຂອງມັນເທິງແຜ່ນດິນໂລກຕໍ່ຈາກນັ້ນພຣະອົງຊົງຕັດສັ່ງວ່າ.  ບັດນີ້ເຮົາຈະສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືເຮົາເອງເຂົາຈະມີອຳນາດເຫນືອກວ່າປາ, ນົກ ,ສັດປ່າ, ແລະສັດເລືອຄານຕ່າງໆ.

ໃນບົດທີ 2 ຂໍ້ 7 ພຣະເຈົ້າຊົງສ້າງມະນຸດຜູ້ຊາຍດ້ວຍດິນ ຊົງເປົ່າລົມຫາຍໃຈເຂົ້າທາງຮູດັງໃຫ້ມີຊີວິດຫາຍໃຈເຂົ້າອອກມະນຸດຈຶ່ງເກີດເປັນວິນຍານແລະມີຊີວິດຢູ່ຊາຍນັ້ນຊື່ວ່າອາດາມແປວ່າຄົນຫລືມະນຸດເຮົາພົບວ່າການຊົງນີຣະມິດສ້າງສັດເດັຽຣະສານທຸກຊະນິດນັ້ນພຣະເຈົ້າບໍ່ໄດ້ສ້າງຕາມແບບແຜນອັນໃດ  ເພາະວ່າບໍ່ໄດ້ມີຕົວຢ່າງທີ່ມີຢູ່ກ່ອນເພື່ອຈະສ້າງໃຫ້ຄ້າຍຄືກັບສິ່ງນັ້ນ. ແຕ່ເມື່ອພຣະເຈົ້າຊົງສ້າງມະນຸດພຣະອົງບໍ່ໄດ້ນີຣະມິດແຕ່ພຣະອົງຊົງໃຊ້ຂີ້ດິນດ້ວຍກັມມະວິທີຢ່າງໃດຢ່າງນຶ່ງຂອງພຣະອົງປັ້ນໃຫ້ເປັນຮູບຮ່າງມະນຸດຂຶ້ນມາດ້ວຍທາດທັງສອງຄືດິນກັບນ້ຳ ແຕ່ເມື່ອອະວັຍຍະວະທຸກສ່ວນຄົບບໍຣິບູນແລ້ວທາດລົມຄືອາກາດອ໊ອກຊີເຢນແລະທາດໄຟຄືອຸນນະພູມ ທີ່ມີສ່ວນໃນຊີວິດຈະຖືກບັນຈຸເຂົ້າໄປຕາມທີຫລັງເພື່ອໃຫ້ຄົບທາດທັງ4ຄືດິນ,ນ້ຳ,ລົມ,ໄຟ.ໄຟແລະລົມຈະເຂົ້າໄປສູ່ຮ່າງກາຍທີ່ເປັນດິນນັ້ນໄດ້ຢ່າງໃດ? ພຣະເຈົ້າຊົງເປົ່າລົມຫາຍໃຈເຂົ້າທາງຮູດັງພ້ອມທັງທາດໄຟຈຶ່ງບັງເກີດເປັນຊີວິດແລະຫາຍໃຈເຂົ້າອອກຮ່າງກາຍຂອງມະນຸດໄດ້ເກັບຄວາມຮ້ອນ (ຄວາມອົບອຸ່ນ) ເອົາໄວ້ຢ່າງອັສຈັນ.

ມະນຸດມີຮູບຮ່າງລັກສະນະທີ່ມາຈາກພຣະລັກສະນະຂອງພຣະເຈົ້າດັ່ງນັ້ນມະນຸດຈຶ່ງແຕກຕ່າງຈາກສັດນັບຕັ້ງແຕ່ພຣະດຳຣັດສັ່ງໃນການຊົງສ້າງແລະກັມມະວິທີການຊົງສ້າງຂອງພຣະເຈົ້າ.ມະນຸດຈຶ່ງມີກຽດຕິຍົດເຫນືອທຸກສິ່ງໃນຈັກກະວານພຣະເຈົ້າຊົງໃຫ້ມະນຸດມີອຳນາດເຫນືອສາຣະພັດທີ່ຊົງສ້າງໄວ້ນັ້ນ.

ໃນບົດທີ2ຂໍ້18ກ່າວວ່າພຣະເຈົ້າຊົງພິຈາຣະນາວ່າບໍ່ຄວນທີ່ມະນຸດຜູ້ຊາຍຈະຢູ່ຄົນດຽວເຮົາຈະສ້າງອີກຄົນນຶ່ງໃຫ້ເປັນຄູ່ຄຽງທີ່ເຫມາະສົມກັບລາວ  ແລ້ວພຣະເຈົ້າຈຶ່ງຊົງບັນດານໃຫ້ຊາຍຄົນນັ້ນນອນຫຼັບສນິດ  ເມື່ອນອນຫຼັບສນິດຢູ່ນັ້ນ ພຣະອົງຈຶ່ງຊົງດຶງເອົາກະດູກຂ້າງອັນນຶ່ງຂອງລາວອອກມາແລະຊົງເຮັດໃຫ້ຊີ້ນກັບກະດູກຂອງລາວຕິດສນິດກັນດີເຫມືອນເດີມສ່ວນກະດູກຂ້າງຊຶ່ງພຣະເຈົ້າໄດ້ດຶງອອກມາຈາກຊາຍຄົນນັ້ນພຣະອົງໄດ້ຊົງສ້າງຂຶ້ນເປັນຍິງແລ້ວຊົງປະທານໃຫ້ແກ່ຊາຍຄົນນັ້ນຊາຍຄົນນັ້ນຈຶ່ງກ່າວວ່ານີ້ເປັນກະດູກແທ້ແລະເນື້ອແທ້ຂອງເຮົາເຮົາຈຶ່ງເອີ້ນລາວວ່າຜູ້ຍິງເພາະຜູ້ຍິງຄົນນີ້ອອກມາຈາກຜູ້ຊາຍຍິງນັ້ນມີຊື່ວ່າເອວາແປວ່າຜູ້ເປັນເຜົ່າພັນແຫ່ງຄົນທີ່ມີຊີວິດດັ່ງນັ້ນທັງຊາຍແລະຍິງຈຶ່ງເກີດຈາກຍິງຄົນນັ້ນສືບຕໍ່ກັນມາຈົນເທົ່າທຸກວັນນີ້.

ພຣະເຈົ້າຜູ້ເປັນຕົ້ນເຫດແຫ່ງການສັນຍະກັມ(ການຜ່າຕັດ)ມະນຸດບໍ່ສາມາດຈະແຍກຜູ້ຊາຍໃຫ້ເປັນຜູ້ຍິງໄດ້ໂດຍວິທີການໃດໆໃນໂລກນອກຈາກຈະປ່ຽນອະວັຍຍະວະໃຫ້ມັນຜິດໄປຈາກລັກສະນະເດີມມະນຸດຈະແບ່ງຄົນຜູ້ດຽວໃຫ້ເປັນສອງຄົນບໍ່ໄດ້ນອກຈາກການສືບພັນຕາມແບບທວິຄູນທີ່ພຣະເຈົ້າຊົງກຳນົດໄວ້ແກ່ມະນຸດແລະສັດແລ້ວແຕ່ຫມໍແພດໄດ້ຮຽນຮູ້ແບບຢ່າງທີ່ພຣະເຈົ້າໄດ້ຊົງກະທຳເຂົາເຈົ້າຮູ້ວິທີຕາມທີ່ພຣະຄຳຂອງພຣະເຈົ້າໄດ້ບັນທຶກໄວ້ນັ້ນທັງໆທີ່ຜູ້ຈົດບັນທຶກພຣະຄັມພີກໍບໍ່ແມ່ນຫມໍແພດທີ່ຈະຄິດອອກວ່າຈະເຮັດຢ່າງໃດ,  ຈະເຮັດວິທີໃດຈຶ່ງຈະເອົາກະດູກຂ້າງອອກມາໄດ້.ການທີ່ຜູ້ຈົດບັນທຶກພຣະຄັມພີຈະຂຽນວ່າໃຫ້ນອນຫລັບສນິດຈົນເອົາກະດູກຂ້າງອອກມາໄດ້ໂດຍທີ່ບໍ່ເຈັບປວດກໍບໍ່ເຄີຍມີມາໃນໂລກນອກຈາກວ່າຄົນທີ່ຕາຍແລ້ວ.ຕໍ່ມາໃນໂລກສມັຍປັດຈຸບັນຈຶ່ງໄດ້ພົບວິທີເຮັດໃຫ້ຫລັບສນິດຈົນສາມາດຜ່າຕັດໄດ້ແຕ່ຕ້ອງໃຊ້ຢາສລົບດັ່ງນັ້ນຈຶ່ງມີການຜ່າຕັດຄົນປ່ວຍໂດຍວິທີໃຊ້ຢາສລົບເກີດຂຶ້ນໃນໂລກ.

ນີ້ຄືຕົ້ນກຳເນີດຂອງມະນຸດຊາດໂດຍຄວາມຕັ້ງໃຈແລະໂດຍພຣະດຳຣັດຂອງພຣະເຈົ້າບໍ່ແມ່ນຢູ່ໆ ກໍບັງເອີນເກີດເປັນຄົນຂຶ້ນມາຕາມທີ່ເອີ້ນກັນວ່າເກີດມາເອງ.ໃນພຣະທັມສຸພາສິດບົດທີ16ຂໍ້4ໄດ້ກ່າວວ່າພຣະເຈົ້າຊົງກະທຳໃຫ້ທຸກສິ່ງມີເປົ້າຫມາຍຂອງມັນໃນພຣະທັມປະຖົມມະການບົດທີ2ກໍໄດ້ກ່າວໄວ້ວ່າຍິງຊາຍຄູ່ນີ້ໄດ້ເປືອຍກາຍຢູ່ເພາະລັກ

ສະນະແຫ່ງຄວາມບາບຍັງບໍ່ມີເທື່ອເຂົາເຈົ້າບໍ່ມີຄວາມອາຍເພາະຄວາມອາຍແມ່ນການປ່ຽນແປງທັມມະຊາດພາຍໃນອັນບໍຣິສຸດໃຫ້ຜິດປົກກະຕິໄປເຂົາເຈົ້າບໍ່ຮູ້ສຶກລະອາຍຕໍ່ກັນໃນການທີ່ເປືອຍກາຍຢູ່ເພາະພຣະຣັສມີຂອງພຣະເຈົ້າຊົງຫຸ້ມຫໍ່ຈິດໃຈຂອງເຂົາເຈົ້າໄວ້ໃຫ້ມີຈິດໃຈທີ່ບໍຣິສຸດຢູ່.ໃນສະພາບຄວາມເປັນມະນຸດໃຫມ່ທີ່ບໍ່ເຄີຍສັມຜັດກັບສິ່ງຍົ້ວຍວນເຫມືອນກັບບັນດາເດັກນ້ອຍທີ່ເບິ່ງຮອບຕົວເຂົາເຈົ້າຫລຽວເຫັນແຕ່ພຽງລັກສະນະທັມມະຊາດຈົນກວ່າເຂົາເຈົ້າຈະຮູ້ວ່ານັ້ນຄືສິ່ງທີ່ຍົ້ວຍວນໃຈ.

ມະນຸດເຮົາເທົ່ານັ້ນຕ້ອງມີການນຸ່ງຫົ່ມເປັນສັນຍາລັກທີ່ຊີ້ໃຫ້ເຫັນວ່າເຮົາມີບາບເປັນທັມມະຊາດຊຶ່ງເປັນພະຍານຢ່າງມີດວງຮຸບຝັງຢູ່ພາຍໃນຖ້າມະນຸດບໍ່ນຸ່ງຫົ່ມໂລກນີ້ຈະເຕັມໄປດ້ວຍຄວາມບາບອັນເປັນຣາຄະຕັນຫາທີ່ຮ້ອນຮົນຍິ່ງກວ່າແສງຕາເວັນ.

## <u>ຄວາມບາບເຂົ້າມາສູ່ໂລກໄດ້ຢ່າງໃດ</u>?

ພຣະເຈົ້າໄດ້ຊົງປະທານສວນເອເດນໃຫ້ເປັນບ່ອນຢູ່ສຳລັບມະນຸດຄູ່ແຮກ ພຣະອົງໄດ້ຊົງສັ່ງເຂົາເຈົ້າວ່າໃນສວນນີ້ມີຕົ້ນໄມ້ຢູ່ສອງຕົ້ນຕົ້ນນຶ່ງແມ່ນຕົ້ນໄມ້ສຳນຶກໃນຄວາມດີຄວາມຊົ່ວແລະອີກຕົ້ນນຶ່ງແມ່ນເຮັດໃຫ້ຊີວິດຈະເຣີນມີອາຍຸຍືນຕລອດໄປເປັນນິດ(ບໍ່ຕາຍ)ເອີ້ນວ່າຕົ້ນໄມ້ແຫ່ງຊີວິດ. ແລ້ວພຣະເຈົ້າຊົງເຕືອນມະນຸດຄູ່ນັ້ນວ່າບັນດາຫມາກໄມ້ໃນສວນນີ້ພວກເຈົ້າກິນໄດ້ທຸກຕົ້ນເວັ້ນໄວ້ແຕ່ຕົ້ນໄມ້ທີ່ສຳນຶກໃນຄວາມດີແລະຄວາມຊົ່ວຖ້າພວກເຈົ້າກິນໃນຕົ້ນນີ້ວັນໃດພວກເຈົ້າຈະຕາຍໃນວັນນັ້ນ.

ແທ້ຈິງແລ້ວມີສັດຫລວງຫລາຍຢູ່ໃນໂລກນີ້ແຕ່ບໍ່ມີສັດຊະນິດໃດເລີຍທີ່ຈະນະມັສການຂາບໄຫວ້ພຣະເຈົ້າແລະສນິດສນົມກັບພຣະເຈົ້ານອກຈາກມະນຸດເທົ່ານັ້ນ. ໃນເວລານັ້ນພະຍາມານຮູ້ວ່າບັດນີ້ໄດ້ມີມະນຸດເກີດຂຶ້ນມາໃນແຜ່ນດິນໂລກແລ້ວມັນຕ້ອງການຈະທຳລາຍກິຈການຂອງພຣະເຈົ້າສິ່ງສຳຄັນນັ້ນແມ່ນມະນຸດຖ້າພະຍາມານທຳລາຍມະນຸດບໍ່ໄດ້ມະນຸດກໍຈະມີອຳນາດເຫນືອພະຍາມານໂລກຂອງພະຍາມານກໍຈະວ່າງເປົ່າບໍ່ມີພົລເມືອງມັນຈຶ່ງໃຊ້ອຸບາຍຫລອກລວງຜູ້ຍິງຄືເອວາ.

ພະຍາມານໄດ້ແປງກາຍເປັນງູໃຫຍ່ເຂົ້າໄປຫາເອວາເວົ້າເປັນພາສາມະນຸດຖາມວ່າຈິງຫລືທີ່ພຣະເຈົ້າສັ່ງຫ້າມວ່າເຈົ້າຢ່າກິນຫມາກໄມ້ທຸກຢ່າງໃນສວນນີ້ຍິງຄົນນັ້ນຈຶ່ງຕອບວ່າຫມາກໄມ້ໃນສວນນີ້ເຮົາກິນໄດ້ທຸກຕົ້ນເວັ້ນໄວ້ແຕ່ຫມາກໄມ້ໃນຕົ້ນທີ່ຢູ່ກາງສວນນັ້ນພຣະເຈົ້າສັ່ງຫ້າມວ່າຢ່າກິນຫລືແຕະຕ້ອງເປັນເດັດຂາດຢ້ານວ່າເຈົ້າຈະຕາຍ. ນີ້ຄືຄວາມສລາດຂອງພະຍາມານມັນຕັ້ງຄຳຖາມຂຶ້ນໃຫ້ມະນຸດສົງສັຍພຣະເຈົ້າ ຊຶ່ງເປັນຂັ້ນໄດທີ່ສຳຄັນຂັ້ນແຮກເຫມືອນດັ່ງທີ່ພວກເຮົາໄດ້ເຫັນໃນປັດຈຸບັນນີ້ທີ່ມີຫລາຍຄວາມຮູ້ຫຼາຍທິສດີຫຼາຍປັນຍາ ທີ່ເຮັດໃຫ້ເກີດຄວາມສົງສັຍໃນຄວາມຈິງເຊັ່ນທິສດີຂອງຊາລສ໌ດາຣ໌ວິນເປັນຕົ້ນ.

ເມື່ອເອວາໄດ້ຖືກຖາມຢ່າງນັ້ນນາງກໍໄດ້ຕອບພະຍາມານຕາມຄວາມຈິງທີ່ກົງໄປກົງມາເພາະວ່າຍັງບໍ່ມີຄວາມສົງສັຍຢ່າງໃດທີ່ມາເຂົ້າແຊກແຊງໃນຈິດໃຈນາງຈຶ່ງຕອບວ່າຫມາກໄມ້ໃນສວນເຮົາກິນໄດ້ທຸກຕົ້ນເວັ້ນໄວ້ແຕ່ຕົ້ນໄມ້ທີ່ຢູ່ໃນກາງສວນນັ້ນພຣະເຈົ້າສັ່ງຫ້າມວ່າຢ່າກິນຫລືແຕະຕ້ອງຢ້ານວ່າເຈົ້າຈະຕາຍພວກເຮົາຈະເຫັນວ່າພະຍາມານມີຄວາມສລາດໃຊ້ຖ້ອຍຄຳໃຫມ່ໆທີ່ເອວາບໍ່ເຄີຍໄດ້ຍິນໄດ້ຟັງມາກ່ອນຊຶ່ງເຮັດໃຫ້ເກີດຄວາມຮູ້ສຶກໃຫມ່ທີ່ຜິດໄປຈາກຄວາມຮູ້ສຶກດັ້ງເດີມຂອງຕົນທີ່ເຄີຍມີແຕ່ກ່ອນເພາະວ່າພະຍາມານເປັນບິດາແຫ່ງການຫລອກລວງເປັນເຈົ້າແຫ່ງການມຸສາມັນຈຶ່ງກ່າວຄຳມຸສາລໍ້ລວງເອວາວ່າເຈົ້າຈະບໍ່ຕາຍດອກເພາະພຣະເຈົ້າຊົງຮູ້ແລ້ວວ່າເມື່ອເຈົ້າກິນຫມາກໄມ້ວັນໃດຕາຂອງເຈົ້າຈະສວ່າງຂຶ້ນໃນວັນນັ້ນແລ້ວມັນກໍແຖມທ້າຍດ້ວຍຖ້ອຍຄຳທີ່ພິກປິ້ນປະຫວັດສາດຂອງມະນຸດຊາດໃຫ້ມະນຸດເປັນກະບົດຕໍ່ພຣະເຈົ້າໃນທັນທີທັນໃດວ່າ...ແລ້ວເຈົ້າຈະເປັນເຫມືອນພຣະເຈົ້າຄືຮູ້ຄວາມດີແລະຄວາມຊົ່ວເມື່ອເອວາໄດ້ຍິນຄຳສັນຍານີ້ແລ້ວຖ້ອຍຄຳຂອງພະຍາມານກໍມີຣິດອຳນາດເຮັດໃຫ້ເອວາພາກພູມໃຈແລະຫລົງເຊື່ອພະຍາມານ.

ຊາຕານຫລືພະຍາມານໄດ້ຊັຍຊນະໃນເວລານັ້ນມັນໄດ້ຫລອກເອວາໃຫ້ຫລຽວເບິ່ງຫມາກໄມ້ທີ່ຕ້ອງຫ້າມຊຶ່ງ

ເປັນໜ້າຢາກກິນ,ໜ້າແຊບ,ເກີດຄວາມຢາກຄວາມຫິວຂຶ້ນຢ່າງກະທັນຫັນ,ເກີດຄວາມຢາກມີປັນຍາແລະຢາກເປັນເໝືອນພຣະເຈົ້ານາງຈຶ່ງຢື້ປິດເອົາໝາກໄມ້ທີ່ຕ້ອງຫ້າມນັ້ນມາກິນຊຶ່ງນາງບໍ່ເຄີຍສົນໃຈມາກ່ອນເພາະວ່າບໍ່ເຄີຍອຶດຢາກ.

ເມື່ອເອວາໄດ້ກິນໝາກໄມ້ນັ້ນແລ້ວ ນາງກໍຍື່ນໃຫ້ສາມີກິນນຳບັດນີ້ພຣະຣັສມີຂອງພຣະເຈົ້າໄດ້ ສລາຍໄປຈາກເຂົາເຈົ້າແລ້ວຈິດໃຈແລະສາຍຕາຂອງເຂົາເຈົ້າທັງຄູ່ໄດ້ຜິດປົກກະຕິໄປຕ່າງກໍຫລຽວເບິ່ງກັນແລະກັນດ້ວຍຄວາມງຶງງວຍວ່າເຂົາເຈົ້າຮູ້ວ່າຕົນເອງໄດ້ເປືອຍກາຍຢູ່ຄວາມໜ້າອາຍໜ້າລັງກຽດຕົນເອງກໍເກີດຂຶ້ນຄວາມຢ້ານກົວນາໆປະການກໍເກີດຂຶ້ນແລະເຂົາເຈົ້າຮູ້ສຶກຢ້ານກົວພຣະເຈົ້າຫລາຍ ໃນຕອນແລງວັນນັ້ນພຣະເຈົ້າໄດ້ສະເດັດມາຢາມເຂົາເຈົ້າພຣະອົງຊົງຮູ້ຄວາມຜິດຄວາມບາບໃນການລ່ວງລະເມີດນັ້ນແລ້ວພຣະອົງຈຶ່ງສັ່ງວ່າເພາະເຫດທີ່ພວກເຈົ້າກະທຳຜິດເຊັ່ນນີ້ພວກເຈົ້າຈະເປັນທີ່ສາບແຊ່ງຫລາຍກວ່າສັດໃຊ້ງານແລະສັດປ່າທັງປວງ.

ຄວາມຜິດອັນຮ້າຍແຮງທີ່ເຂົາເຈົ້າບໍ່ເຊື່ອຟັງພຣະເຈົ້າແຕ່ຫັນໄປຟັງພະຍາມານແລະກະທຳຜິດຕາມກິຈການຂອງພະຍາມານນັ້ນເປັນການເປີດທາງໃຫ້ຄວາມບາບເຂົ້າມາສູ່ໂລກ, ມະນຸດຜູ້ສືບເຊື້ອສາຍຂອງອາດາມແລະເອວາຕໍ່ໆ ມາຈະໄດ້ຮັບມໍຣະດົກທາງຄວາມຜິດບາບຈົນກວ່າຈະສິ້ນໂລກ. ດັ່ງນັ້ນພຣະເຈົ້າຈຶ່ງຊົງຂັບໄລ່ເຂົາເຈົ້າທັງສອງອອກຈາກສວນເອເດນ. ເຂົາເຈົ້າຕ້ອງທຳມາຫາກິນລ້ຽງຊີບດ້ວຍມືຂອງຕົນເອງຢ່າງຍາກລຳບາກແລະສືບເຜົ່າພັນມະນຸດມາຈົນເທົ່າທຸກວັນນີ້.ນີ້ຄືຄວາມບາບທີ່ໄດ້ເຂົ້າມາສູ່ໂລກມະນຸດອັນສວຍງາມໜ້າຮັກແລະເຮັດໃຫ້ໂລກກາຍເປັນໂລກອັນສົກກະປົກເປິະເປື້ອນດ້ວຍຄວາມບາບເປັນສາຍເລືອດແຫ່ງຄວາມຜິດບາບມະນຸດຈຶ່ງໄດ້ຕົກຢູ່ພາຍໃຕ້ອຳນາດຂອງມານຊາຕານຕລອດມາ.

ເພາະມະນຸດມີຄວາມຜິດບາບຄວາມບາບຂອງມະນຸດນັ້ນເອງທີ່ເປັນສາຍເຫດກີດກັນບໍ່ໃຫ້ມະນຸດກັບພຣະເຈົ້າສນິດສນົມກັນເໝືອນແຕ່ກ່ອນ ມະນຸດເປັນວິນຍານທີ່ຖືກມານຄວບຄຸມໃຫ້ເປັນກະບົດຕໍ່ສູ້ກັບພຣະເຈົ້າປະຫວັດສາດຂອງມະນຸດຊາດຖືກປ່ຽນແປງໄປຍິ່ງດົນນານໄປເທົ່າໃດ ມະນຸດກໍຍິ່ງຫ່າງໄກໄປຈາກພຣະເຈົ້າເທົ່ານັ້ນ ຄວາມບາບຂອງມະນຸດກໍເພີ້ມທະວີຂຶ້ນໃນຫລາຍສິ່ງຫລາຍຢ່າງມັນໄດ້ປິດບັງຈິດໃຈຂອງມະນຸດຢ່າງສນິດຈົນມະນຸດບໍ່ມີໂອກາດທີ່ຈະຮູ້ຈັກກັບພຣະເຈົ້າໄດ້ອີກໃນທີ່ສຸດມະນຸດກໍຫລົງລືມພຣະເຈົ້າແລະກ້າວໄປສູ່ການປະຕິເສດພຣະເຈົ້າຢ່າງສິ້ນເຊີງ.

ມະນຸດໄດ້ປ່ຽນເປັນສັນຊາດສະຍານແຫ່ງຄວາມຢ້ານກົວຂຶ້ນພາຍໃນຈຶ່ງຈຳເປັນທີ່ມະນຸດຈະຕ້ອງສແວງຫາທີ່ເພິ່ງ.....

- ເພື່ອປົກປ້ອງຄຸ້ມຄອງໃຫ້ພົ້ນພັຍອັນຕະລາຍຈາກຄວາມຢ້ານກົວ
- ເພື່ອທີ່ຈະໃຫ້ສິ່ງນັ້ນສນອງຄວາມຕ້ອງການຂອງຕົນເອງ
- ເພື່ອການພົ້ນຈາກຄວາມທຸກທີ່ມີຢູ່ໃນຈິດໃຈໂດຍບໍ່ຮູ້ສາຍເຫດ

ບາງຄົນກໍສແວງຫາທີ່ເພິ່ງແບບງ່າຍໆເຊັ່ນຕົ້ນໄມ້ພູເຂົາກ້ອນຫີນແລະທັມຊາດທີ່ຕົນເຫັນວ່າຈະປ້ອງກັນພັຍອັນຕະລາຍໄດ້ເພື່ອສນອງຄວາມຕ້ອງການຂອງຕົນເອງ ບາງຄົນກໍເພິ່ງພູດຜີປີສາດວິນຍານຊົ່ວໃນສະຖານອາກາດແມ່ນ້ຳຕາເວັນເດືອນໝູ່ດາວໃນທ້ອງຟ້າເຖິງແມ່ນເຂົາຈະນະມັສການຂາບໄຫວ້ສິ່ງເຫລົ່ານັ້ນຫລາຍເທົ່າໃດແລະດ້ວຍວິທີການຢ່າງໃດກໍຕາມຄວາມທຸກກໍບໍ່ໄດ້ໝົດສິ້ນໄປຈາກເຂົາຄືບໍ່ໄດ້ຫລຸດພົ້ນໄປຈາກຄວາມທຸກນາໆປະການພາຍໃນຈິດໃຈນັ້ນເລີຍ.ດັ່ງນັ້ນມະນຸດຈຶ່ງສແວງຫາຄວາມລອດພົ້ນດ້ວຍສະຕິປັນຍາຄວາມຄິດທີ່ຕົນໄດ້ຄົ້ນຄວ້າໂດຍຫວັງວ່າຈະເປັນເຄື່ອງຊ່ອຍດັບທຸກຫລືບັນເທົາຄວາມທຸກພາຍໃນຈິດໃຈລົງໄດ້ ແຕ່ຄວາມທຸກກໍຍັງມີຢູ່ຢ່າງໜັກໜ່ວງໃນຊີວິດຂອງມະນຸດເພາະວ່າສະຕິປັນຍາຂອງມະນຸດທີ່ຄິດຄົ້ນຂຶ້ນມານັ້ນຊ່ອຍເຫລືອຕົນເອງບໍ່ໄດ້ເລີຍ.ດ້ວຍເຫດນີ້ລັດທິ, ການບູຊາ.ການນະມັສການຂາບໄຫວ້,ພິທີກັມ, ແລະສາສນາຕ່າງໆທີ່ເປັນຄຳສອນຂອງມະນຸດຈຶ່ງເກີດຂຶ້ນໃນສັງຄົມຂອງມະນຸດຊາດແລະແຕກເປັນໜໍ່ເປັນແໜງຂຶ້ນຢ່າງຫລວງຫລາຍ ດັ່ງທີ່ພວກເຮົາໄດ້ເຫັນກັນຢູ່ທຸກວັນນີ້ການປະຕິເສດ

ວ່າບໍ່ມີພຣະເຈົ້າກໍໄດ້ກາຍເປັນຫລັກທັມອັນນຶ່ງຂອງບັນດາມະນຸດຊາດ.

ຂ້າພະເຈົ້າຈະຂໍນໍາເອົາສັນຊາດສະຍານແຫ່ງຄວາມຊົງຈໍາຂອງມະນຸດແຕ່ດັ້ງເດີມທີ່ໄດ້ສືບທອດມາຈາກບັນພະບຸຣຸດຄູ່ແຣກທີ່ຍັງເຫລືອຢູ່ໃນຊົນຊາດທີ່ເກົ່າແກ່ຊຶ່ງໄດ້ຈົດຈໍາເຖິງຄວາມຜິດດັ້ງເດີມຂອງມະນຸດຄູ່ແຣກມາເລົ່າສູ່ຟັງດັ່ງຕໍ່ໄປນີ້.

ຄວາມເຊື່ອແລະຕໍານານຂອງຊາດເປີເຊັຽບັນທຶກໄວ້ວ່າບິດາມານດາຄູ່ແຣກຂອງຄົນເຮົາເປັນຜູ້ບໍຣິສຸດມີຈິດວິນຍານບໍຣິສຸດແລະອາສັຍຢູ່ໃນສວນສມັຍນັ້ນມີຕົ້ນໄມ້ທີ່ໃຫ້ອາຍຸຍືນຕລອດໄປເປັນນິດ  ຕໍ່ມາໄດ້ມີວິນຍານຊົ່ວມາປາກົດເປັນຮູບຮ່າງເໝືອນງູຕົ້ນໄມ້ແຫ່ງຊີວິດນັ້ນຈຶ່ງສິ້ນສຸດລົງ.

ຊາວຮິນດູມີຄວາມເຊື່ອວ່າມະນຸດຄູ່ແຣກບໍຣິສຸດປາສຈາກຄວາມບາບແລະໂຣກພັຍໄຂ້ເຈັບເຂົາເຈົ້າມີທຸກສິ່ງທີ່ຕ້ອງປະສົງແລະມີອາຍຸໝັ້ນຍືນ.

ຄວາມເຊື່ອບູຮານຂອງກຣີກມີຄວາມເຊື່ອວ່າໃນຍຸກແຣກມະນຸດບໍ່ມີການນຸ່ງຫົ່ມເສື້ອຜ້າເຂົາເຈົ້າເອີ້ນວ່າຍຸກທອງຄໍາປາສຈາກຄວາມຊົ່ວແລະຄວາມລໍາບາກມີຄວາມສັມພັນກັບພຣະເຈົ້າທັງປວງໂດຍບໍ່ມີສິ່ງໃດກີດກັ້ນແລະແຜ່ນດິນໂລກກໍອຸດົມສົມບູນ.

ຕໍານານຄວາມເຊື່ອຂອງຈີນໃນຍຸກແຣກເປັນຍຸກແຫ່ງຄວາມສຸກສໍາລານຍຸກນັ້ນມະນຸດມີອາຫານອຸດົມສົມບູນອ້ອມຮອບໄປດ້ວຍບັນດາສັດທີ່ລ້ຽງ.ມອງໂກເລັຽແລະທິເບດກໍມີຄວາມເຊື່ອດຶກດໍາບັນຢ່າງນີ້ເໝືອນກັນ.

ຕໍານານຄວາມເຊື່ອຂອງຊາດນິວຕັນມະນຸດເລີ້ມແຣກມີຄວາມຊື່ນບານຢູ່ກັບການລ້ຽງແກະແລະການສລອງຄືການເຂົ້າເຝົ້າພຣະເຈົ້າ,ນະມັສການພຣະເຈົ້າ,ແລະຢູ່ກັບພຣະເຈົ້າ.

ຄວາມເຊື່ອຂອງຊາວອີສານແລະຄົນລາວເຊື່ອວ່າດັ້ງເດີມນັ້ນມີຄົນພຽງສອງຄົນຄືຍິງນຶ່ງຊາຍນຶ່ງເອີ້ນວ່າປູ່ສັງກະສາແລະຍ່າສັງກະສີ.

ນີ້ຄືສັນຊາດສະຍານແຫ່ງຄວາມສໍານຶກດັ້ງເດີມຊຶ່ງຢູ່ໃນທັມມະຊາດຂອງມະນຸດ. ເໝືອນກັບຄົນໄທ/ລາວໄດ້ໄຫວ້ວອນຂໍໃຫ້ສິ່ງສັກສິດໃນສາກົນລະໂລກຊ່ວຍດົນບັນດານ.ແມ່ນຫຍັງເປັນສິ່ງສັກສິດໃນສາກົນນອກຈາກພຣະເຈົ້າພຽງເທົ່ານັ້ນ.ແຕ່ຮົມສົບຂອງຄົນໄທ/ລາວຖືກປິດບັງໄວ້ບໍ່ໃຫ້ເອີ້ນອອກພຣະນາມຂອງພຣະເຈົ້າໂດຍກົງ.ແນ່ນອນການສືບທອດຄວາມຈິງຕາມສັນຊາດສະຍານຂອງມະນຸດນັ້ນມີຢູ່ທຸກເຊື້ອຊາດທຸກຄວາມເຊື່ອແຕ່ຄວາມຄິດຂອງເຂົາເຈົ້າໄດ້ຫັນເຫໄປກັບສິ່ງແວດລ້ອມ.ຄວາມເຊື່ອຂອງມະນຸດຈຶ່ງພາຕົນໄປບໍ່ຖືກທາງຄືບໍ່ໄດ້ໄປທາງທີ່ຈະໄປເຖິງອົງພຣະຜູ້ເປັນເຈົ້າ.

ດັ່ງນັ້ນ  ມະນຸດຈຶ່ງລືມພຣະເຈົ້າຜູ້ຊົງສ້າງເພາະເມື່ອປະຕິເສດພຣະເຈົ້າແລ້ວ ຄໍາຕອບຈຶ່ງເປັນເຜີນໆ ບໍ່ມີຈຸດໝາຍແລະສລູບເອົາວ່າມັນເປັນເອງເກີດມາເອງ.  ເມື່ອຄິດເອົາເອງກໍຕ້ອງກົ້ມໜ້າຫາທີ່ເພິ່ງຕໍ່ໄປບາງຄົນກໍເຊື່ອໝັ້ນໃນຄວາມຄິດຂອງຕົນຈຶ່ງຍຶດເອົາຄວາມຄິດຂອງຕົນເປັນທີ່ເພິ່ງເພື່ອຈະໄດ້ຊ່ວຍຕົນເອງຄວາມຄິດນັ້ນຈຶ່ງກາຍເປັນອຸປສັກຂັດຂວາງບໍ່ໃຫ້ລາວໄດ້ຮູ້ຈັກກັບອົງພຣະຜູ້ເປັນເຈົ້າ.

---